LAO

# ແຜນຕໍ່ຕ້ານຢາເສພຕິດ ເຂດ ກາບຣາມາຕາ

ເຈ້ຍຂໍ້ມູນ ■ 1 ກໍຣະກະດາ(7) 2001

## ແຜນຕໍ່ຕ້ານຢາເສພຸຕິດ ເຂດ ກາບຣາມາຕາ ແມ່ນຫຍັງ?

ແຜນຕໍ່ຕ້ານຢາເສພຕິດ ເຂດ ກາບຣາມາຕາ ແມ່ນແຜນອັນລະອຽດ ເພື່ອຕໍ່ສູ້ກັບຢາເສພຕິດ ແລະ ບັນຫາກ່ຽວກັບອາຊຍາກັມໃນເຂດກາບຣາມາຕາ. ແຜນນີ້ຮວມເຖິງ:

- ມີເຈົ້າໜ້າທີ່ຕຳຣວດເພີ້ມພ້ອມທັງມີອຳນາດຫລາຍຂຶ້ນ
- ມີການຮັກສາສຳລັບຜູ່ໃຊ້ຢາເສພຕິດ ແລະ ການຂຍາຍບໍຣິການຟື້ນຟູສຂພາບ ແລະການຮັກສາສຳລັບຜູ່ໃຊ້ຢາເສພຕິດໃນເຂດຊິດນີ້ຕະເວັນຕົກສຽງໃຕ້.
- ການຂຍາຍໂຄງການການພົວພັນແລະປ້ອງກັນໃນຂັ້ນຕົ້ນ ແລະ
- ໂຄງການ City Watch (ເບິ່ງແຍງເມືອງ) ທີ່ຈະນຳຊຸມຊົນແລະຕຳຣວດມາເຂົ້າກັນເພື່ອ ຊອກຫາທາງແກ້ໄຂບັນຫາອາຊຍາກັມໃນທ້ອງຖິ່ນ.

ຣັຖບານໄດ້ໃຫ້ເງິນທຶນຊ່ວຍເຫລືອເພີ້ມຕື່ມອີກຈຳນວນ 18.8 ລ້ານດອນລາພາຍໃນລະຍະເວລາສີ່ປີ ເພື່ອນຳໃຊ້ແຜນຕໍ່ຕ້ານຢາເສພຕິດນີ້.

ແຜນນີ້ແມ່ນຄວາມພຍາຍາມໝົດທຸກຢ່າງທີ່ຈະນຳເອົາກາບຣາມາຕາກັບຄືນມາສູ່ຊຸມຊົນທີ່ຢູ່ ແລະ ເຮັດວຽກໃນເຂດນີ້.

ໜ້າທີ່ນີ້ບໍ່ແມ່ນສິ່ງງ່າຍ. ບໍ່ມີສິ່ງໃດທີ່ຈະແກ້ໄຂໄດ້ໄວ. ມັນຈະຕ້ອງການຄວາມພຍາຍາມອັນແທ້ຈິງ ຈາກທຸກໆຄົນທີ່ກ່ຽວພັນ ແລະ ຄວາມເອົາໃຈໃສ່ຢ່າງຈິງຈັງໃນການເຮັດວຽກຮ່ວມກັນ.

ນາຍກຣັຖ ບ໋ອບ ຄາຣຣ

## ອຳນາດ ແລະ ຊັພຍາກອນໃຫມ່ ສຳລັບຕຳຣວດ

ແຜນຕໍ່ຕ້ານຢາເສພຕິດ ເຂດ ກາບຣາມາຕາ ແນ່ໃຈວ່າຕຳຣວດມີອຳນາດ ແລະ ຊັພຍາກອນທີ່ພວກເຂົາຕ້ອງການເພື່ອຕໍ່ສູ້ກັບອາຊຍາກັມທີ່ກ່ຽວພັນກັບຢາເສພຕິດ.

### ອຳນາດໃຫມ່ຂອງຕຳຣວດ

ຕຳຣວດນິວເຊົາທ໌ເວລສ໌ໄດ້ມີອຳນາດເພີ້ມຂຶ້ນກ່ຽວກັບເຮືອນທີ່ມີຢາເສພຕິດ - ກົດໝາຍ ແລະ ການ ປັບໃຫມອັນໃຫມ່ນີ້ໃຊ້ໄດ້ທົ່ວຣັຖ.

- ຈາກວັນທີ 1 ກໍຣະກະດາ(7) 2001 ເປັນຕົ້ນໄປ ຕຳຣວດມີອຳນາດໃຫມ່ເພື່ອຈັບກຸມ:
  - ຜູ່ໃດຜູ່ນຶ່ງທີ່ເຂົ້າຫລືອອກເຮືອນທີ່ສົງໃສວ່າມີຢາເສພຕິດ ນອກຈາກວ່າຄົນນັ້ນສາ ມາດບອກຄວາມປະສົງອັນເປັນທີ່ຖືກຕ້ອງຕາມກົດໝາຍ
  - ເຈົ້າຂອງ ຫລື ຜູ່ອາໃສທີ່ຮູ້ແລ້ວແຕ່ຍັງອະນຸຍາດໃຫ້ໃຊ້ເຮືອນນັ້ນເປັນບ່ອນໃຊ້ຢາເສພຕິດ, ແລະ
  - ຜູ່ໃດຜູ່ນຶ່ງທີ່ຈັດ ຫລື ຊ່ວຍໃນການຈັດແຈງເຮືອນທີ່ມີຢາເສພຕິດ ຕົວຢ່າງເຊັ່ນ ເປັນຜູ່ແນມທາງໃຫ້.
- ຈາກວັນທີ 1 ກໍຣະກະດາ(7) 2001 ຕຳຣວດຍັງຈະມີອຳນາດທີ່ຈະ "ເຄື່ອນຍ້າຍ" ຄົນທີ່ ພວກເຂົາສົງໃສວ່າພຍາຍາມຈັດແຈງການຂາຍຢາເສພຕິດ
- ຕຳຣວດຈະມີອຳນາດໃຫມ່ໃນການກວດຄົ້ນຫາຢາເສພຕິດ. ນີ້ຮວມເຖິງອຳນາດໃນການກັກ ຕົວບກຄົນ ແລະ ໃຫ້ນາຍໝໍທຳການກວດຄົ້ນຖ້າຫາກມີຄວາມສົງໃສວ່າຄົນນັ້ນໄດ້ກືນຢາລົງທ້ອງ ຫລື ຊຸກເຊື່ອງໄວ້ຢູ່ພາຍໃນໂຕ. ການຄົ້ນນີ້ອາດຈະເຮັດໂດຍໃຊ້ການສ່ອງແສງ ເຊັ່ນໃຊ້ ເອັກຊເຣ, ໃຊ້ເຫລັກກ້າ (MRI), ອລຕຣາຊາວດ໌ ແລະ CAT Scans. ຖ້າຫາກວ່າຂັ້ນຕອນການກວດເຫລົ່ານີ້ສາມາດຈັບໄດ້ວ່າມີຢາເສພຕິດຢູ່ໃນໂຕຂອງຜູ່ຕ້ອງສົງໃສ, ຕຳຣວດກໍຈະມີອຳນາດກັກຕົວຜູ່ຕ້ອງສົງໃສນັ້ນໄວ້ໄດ້ເຖິງ 48 ຊົ່ວໂມງ ຈົນກວ່າຈະເອົາຢາ ເສພຕິດນັ້ນອອກມາໄດ້.

### ກົດໝາຍກ່ຽວກັບປືນ

ຕຳຣວດຣາຍງານວ່າມີການເຊື່ອມໂຍງລະຫວ່າງການຈຳໜ່າຍຢາເສພຕິດ ແລະ ການຄ້າປືນ.

ຈາກວັນທີ 1 ກໍຣະກະດາ(7)2001 ກົດໝາຍໃຫມ່ຈະແນໃສ່ການຄ້າຂາຍປືນທີ່ຜິດກົດໝາຍ ແລະ ການປັບໃຫມກໍສູງຂຶ້ນ. ນີ້ຮວມເຖິງການເພີ້ມຄ່າປັບໃຫມໃນການມີປືນທົ່ວໄປ ແລະ ປືນສັ້ນທີ່ຕ້ອງຫ້າມຢູ່ ໃນຄວາມຄອບຄອງ ແບບຜິດກົດໝາຍ ຈາກການຕິດຄຸກ10 ປີ ເປັນ 14 ປີ.

ການນິຣະໂທສກັມທົ່ວຣັຖເປັນເວລາສາມເດືອນໄດ້ເລີ້ມມາຕັ້ງແຕ່ວັນທີ29 ມິຖຸນາ(6) 2001 ເພື່ອອະນຸໂລມໃຫ້ລົງທະບຽນປືນ ຫລື ມອບປືນໃຫ້ຕໍ່ຕຳຣວດ. ພາຍໃຕ້ການນິຣະໂທສກັມນີ້, ຜູ່ໃດທີ່ບໍ່ມີໃບອະນຍາດມີປືນສາມາດມອບປືນໃຫ້ຕຳຣວດໂດຍບໍ່ຕ້ອງຢ້ານວ່າຈະຖືກປັບໃຫມ ຫລື ຖືກໂທດ. ນິຣະໂທສກັມນີ້ ໃຊ້ໄດ້ກັບປືນທຸກຊນິດ. ຈະນຳປືນໄປມອບຕໍ່ສະຖານີຕຳຣວດແຫ່ງໃດກໍໄດ້. ຖ້າທ່ານບໍ່ແນ່ໃຈວ່າປືນທີ່ທ່ານມີໃນຄວາມຄອບຄອງນັ້ນໄດ້ຖືກລົງທະບຽນຫລືບໍ່ ຫລືວ່າຕ້ອງການຂໍ້ມູນເພີ້ມຕື່ມ ຈົ່ງຕິດຕໍ່ **Firearms Registry Amnesty Information Line** (ສາຍໃຫ້ຂໍ້ມູນ ຂອງຫ້ອງການ ການລົງທະບຽນ ແລະ ການນິຣະໂທສກັມ ປືນ ໂດຍບໍ່ເສັຍຄ່າ ເບີ **1300 557 772.**

Produced by: Premier's Department, New South Wales.

ActNow NSW GOVERNMENT AND YOU
Taking a stand against drugs

## ຊັພຍາກອນຕ່າງໆຂອງຕໍາຣວດ

ຊັພຍາກອນທີ່ມີໃຫ້ເຈົ້າໜ້າທີ່ຕໍາຣວດຢູ່ກາບຣາມາຕາທີ່ພວມມີເພີ້ມຂຶ້ນຮວມທັງ:

- ຕໍາຣວດຈໍານວນ 108 ຄົນ ຢູ່ໃນເຂດບັງຄັບບັນຊາທ້ອງຖິ່ນ (ເພີ້ມຂຶ້ນຈາກ 84 ຄົນ ໃນ ປີ 1995)
- ຕໍາຣວດນັກສືບເຣື່ອງຢາເສພຕິດເພີ້ມຂຶ້ນອີກ 10 ຄົນ
- ຕໍາຣວດຂີ່ຣົຖຖີບລາດຕະເວນຕາມຖນົນແລະຊອກຊອຍເພີ້ມຂຶ້ນອີກ 6 ຄົນ
- ຕໍາຣວດຈາກ Greater Hume Target Action Group ຈໍານວນ 90 ຄົນ, ແລະ
- ທີມຂອງ Drug Detection Dogs

## ນາຍພາສາເພື່ອຊ່ວຍຕໍາຣວດ

Community Relations Commission (ຫ້ອງການສັມພັນລະຫວ່າງຊຸມຊົນ) ເຮັດວຽກກັບຕໍາຣວດທີ່ກາບຣາມາຕາເພື່ອປັບປຸງບໍຣິການນາຍພາສາຕລອດເວລາໃຫ້ດີຂຶ້ນ. ນາຍພາສາຈະຊ່ວຍຕໍາຣວດໃນການສໍາພາດຜູ້ຕ້ອງສົງໃສ, ການອົບຮົມຊູຜູ້ຮັບເຄາະ, ການສອບຖາມປະຈໍາວັນ ແລະ ການຕິດຕໍ່ກັບຊຸມຊົນທີ່ມີທຸຣະກິດການຄ້າໃນທ້ອງຖິ່ນ.

## ການຝຶກຕໍາຣວດທ້ອງຖິ່ນກ່ຽວກັບວັທນະທັມ ແລະ ພາສາ

NSW Police Service (ກົມຕໍາຣວດຣັຖນິວເຊົາທ໌ເວລສ໌) ແລະ Department of Education and Training (ກະຊວງສຶກສາ ແລະ ຝຶກຫັດ) ພວມຈັດຫລັກສູດການຮຽນທີ່ TAFE (ວິທຍາລັຍ ວິຊາຊີພ) ເພື່ອຈະສອນຕໍາຣວດກາບຣາມາຕາກ່ຽວກັບວັທນະທັມແລະ ພາສາອື່ນນອກຈາກອັງກິດຂັ້ນ ພື້ນຖານ.

### The City Watch Program
### (ໂຄງການເບິ່ງແຍງເມືອງ) ຂອງ ກາບຣາມາຕາ)

ໂຄງການ Cabramatta City Watch ຈະປັບປຸງເຣື່ອງຄວາມປອດພັຍ ແລະ ການຮັກສາຄວາມສງົບໃນກາບຣາມາຕາ ໂດຍການນໍາເອົາພວກນັກທຸຣະກິດທ້ອງຖິ່ນ, ຕໍາຣວດ ແລະ ຊຸມຊົນມາເຂົ້າກັນເພື່ອຊອກຫາທາງແກ້ໄຂເຣື່ອງອາຊຍາກັມໃນທ້ອງຖິ່ນ.

ສະມາຊິກພາບຂອງ Cabramatta City Watch Council ຮວມມີຜູ້ບັງຄັບບັນຊາຕໍາຣວດ ເຂດ ທ້ອງຖິ່ນ (ປະທານ), ສະມາຊິກສະພາຂອງເຂດກາບຣາມາຕາ, ເຈົ້າເມືອງແຟຣ໌ຟຼວດ໌, ຜູ້ຕາງໜ້າສະພາການຄ້າຂອງກາບຣາມາຕາ, ສະມາຄົມທຸຣະກິດກາບຣາມາຕາ, ກຸ່ມຊຸມຊົນຕ່າງໆ, ຫ້ອງການນາຍົກຣັຖ ແລະ Community Relations Commission.

Cabramatta City Watch Council ຈະເຮັດວຽກກັບພວກ "ກຸ່ມເຊື່ອມໂຍງ". ກຸ່ມເຊື່ອມໂຍງແຕ່ ລະກຸ່ມຈະຮວມເອົາສະ ມາຊິກຈາກກຸ່ມຊຸມຊົນທີ່ມີຄວາມສົນໃຈ, ເຈົ້າໜ້າທີ່ຕໍາຣວດຄົນນຶ່ງແລະສະມາຊິກຈາກຫ້ອງການ Community Relations Commission.

ເພື່ອຂໍເອົາຂໍ້ມູນເພີ້ມຕື່ມກ່ຽວກັບໂຄງການ *Cabramatta City Watch* ຈົ່ງຕິດຕໍ່ *Rosa Droescher* (ໂຣຊາ ດຣົສເຊ) ທີ່ຫ້ອງການ *Community*

## ການຮັກສາ ແລະ ຟື້ນຟູສຸຂພາບ

ຈາກວັນທີ 1 ກໍຣະກະດາ(7) 2001 ຈະມີໂຄງການໃໝ່ສອງໂຄງການ - Police Drug Bail (ການປະກັນຕົວກັບຕໍາຣວດເຣື່ອງຢາເສພຕິດ) ແລະ Magistrates Early Referral into Treatment (MERIT) (ຜູ້ພິພາກສາສົ່ງໄປຫາການຮັກສາໄວ) ປະຕິບັດໃນເຂດກາບຣາມາຕາ. ໂຄງການທັງສອງອັນນີ້ຈະນໍາພາຜູ້ກະທໍາຄວາມຜິດທີ່ມີບັນຫາກັບຢາເສພຕິດໃຫ້ໄປຫາບໍຣິການການຮັກສາແລະຟື້ນຟູ ສຸຂພາບເພື່ອຈະປ້ອງກັນການກໍ່ອາຊຍາກັມທີ່ພົວພັນກັບຢາເສພຕິດຕື່ມອີກ ແລະ ເພື່ອຊ່ວຍປັບປຸງສຸຂພາບ ແລະ ຄວາມຢູ່ດີຂອງບຸກຄົນອີກນໍາ.

### Police Drug Bail

ພາຍໃຕ້ໂຄງການ Police Drug Bail ນີ້

- ຜູ້ຢູ່ໃນເຂດທ້ອງຖິ່ນທີ່ຖືກຂໍ້ຫາກະທໍາຄວາມຜິດກ່ຽວກັບຢາເສພຕິດອາດຈະຖືກປະເມີນເບິ່ງເພື່ອ ການຮັກສາ ຊຶ່ງເປັນເງື່ອນໄຂອັນນຶ່ງຂອງການປະກັນຕົວ, ແລະ
- ຖ້າຫາກຄົນນັ້ນເປັນຜູ້ທີ່ມາຈາກເຂດອື່ນກໍຈະເປັນການລະເມີດເງື່ອນໄຂການປະກັນຕົວ ຖ້າຫາກວ່າເຂົາກັບເຂົ້າມາກາບຣາມາຕາອີກ.

ເພື່ອຂໍເອົາຂໍ້ມູນເພີ້ມຕື່ມ ຈົ່ງຕິດຕໍ່ສະຖານີຕໍາຣວດກາບຣາມາຕາ ໂທຣະສັພ ເບີ *9725 8999.*

### Magistrates Early Referral into Treatment (MERIT) – ກາບຣາມາຕາ

ໂຄງການ Magistrates Early Referral into Treatment (MERIT) ນີ້ ອະນຸຍາດໃຫ້ຜູ້ພິພາກສາ ເຮັດໃຫ້ການຮັກສາການຕິດຢາເສພຕິດເປັນເງື່ອນໄຂອັນນຶ່ງຂອງການປະກັນຕົວ.

ຜູ້ເຂົ້າຮ່ວມຈະຖືກຄວບຄຸມຢ່າງໃກ້ຊິດ. ຜູ້ພິພາກສາໄດ້ຮັບລາຍງານເຣື່ອງຄວາມຄືບໜ້າຂອງພວກເຂົາເປັນປະຈໍາ.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ຄນະທີມ *(MERIT)* ຂອງເຂດຕະເວັນຕົກສ່ຽງໃຕ້ ໂທຣະສັພ ເບີ *9602 6777.*

## ຂຍາຍບໍຣິການຟື້ນຟູສຸຂພາບ

ຄວາມສໍາເຣັດຂອງໂຄງການຕ່າງໆເຊັ່ນໂຄງການ Police Drug Bail ແລະ ໂຄງການ MERIT ນັ້ນ ຂຶ້ນຢູ່ກັບການໄດ້ຮັບການຮັກສາທີ່ມີປະສິດທິຜົນ. ຣັຖບານພວມເຮັດວຽກຮ່ວມກັບຊຸມຊົນໃນທ້ອງຖິ່ນເພື່ອຈະເຮັດໃຫ້ມີບໍຣິການການຟື້ນຟູສຸຂພາບ ແລະການຮັກສາເພີ້ມຂຶ້ນ.

ບໍຣິການຕ່າງໆທີ່ມີເພີ້ມຂຶ້ນນັ້ນຈະຮວມເຖິງ:

- Central Assessment Team (ຄນະສູນກາງການປະເມີນ) ທີ່ໂຮງພຍາບານແຟຣ໌ຟຼວດ໌ ເພື່ອໃຫ້ການປະເມີນແລະວາງແຜນການຮັກສາ. ບໍຣິການນີ້ຈະສົ່ງຜູ້ໃຊ້ບໍຣິການໄປຫາບ່ອນໃຫ້ບໍຣິການດ້ານອະນາມັຍ, ການຮັກສາຢາເສພຕິດ ແລະ ສວັດດີການ.
- ມີຕຽງສາມໜ່ວຍຢູ່ໂຮງພຍາບານ ລີເວີພູລ ແລະ ອີກສີ່ໜ່ວຍຢູ່ທີ່ GROW, ອົສຕຣາລ, ສໍາລັບຜູ້ທີ່ມີບັນຫາໜັກທາງປະສາດ ແລະ ຢາເສພຕິດ.
- ມີຕຽງເພີ້ມອີກ 8 ເພື່ອໃຫ້ບໍຣິການດ້ານຟື້ນຟູສຸຂພາບແບບລະຍະສັ້ນສໍາລັບຜູ້ທີ່ຖືກສົ່ງມາຈາກບໍຣິການຮັກສາຢາເສພຕິດອື່ນໆ ຫລື ຈາກບໍຣິການ ອະນາມັຍອື່ນໆ.

ບໍຣິການການຮັກສາເພີ້ມຕື່ມກໍຈະມີໄວ້ໃຫ້.ບໍຣິການນີ້ຈະຖືກຄວບຄຸມເປັນຢ່າງດີແລະ ບໍຣິຫານໂດຍທາງຣັຖບານ. **Treatment Services Monitoring Committee** (ຄນະກັມມະການຄວບຄຸມບໍຣິການການຮັກສາ) ຈະຖືກຈັດຕັ້ງຂຶ້ນເພື່ອຄວບຄຸມເບິ່ງການດໍາເນີນງານຂອງບໍຣິການຕ່າງໆເຫຼົ່ານີ້.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ ຜູ້ປະສານງານບໍຣິການຢາເສພຕິດແລະເຫຼົ້າເຂດຊິດນີຕະເວັນຕົກສ່ຽງ ໃຕ້ ໂທຣະສັພ ເບີ *9828 4877.*

## ເຮືອນຍາມສຸກເສີນ

Department of Housing (ກະຊວງເຄຫະສະຖານ) ຈະມີທີ່ພັກອາສັຍໃນຍາມສຸກເສີນເພີ້ມຂຶ້ນ ຊຶ່ງຮວມເຖິງ:

- ທີ່ພັກແບບຊົ່ວຄາວສຳລັບຜູ່ໃຊ້ບໍລິການໃນຂນະທີ່ພວມຊອກຫາທີ່ພັກທາງອື່ນ, ແລະ
- ການຊ່ວຍເຫລືອຜູ່ໃຊ້ບໍລິການໃຫ້ການເຊົ່າເຮືອນເອກກະຊົນຫມັ້ນຄົງ

ເພື່ອຂໍເອົາຂໍ້ມູນເພີ້ມຈົ່ງຕິດຕໍ່ຫ້ອງການກະຊວງເຄຫະສະຖານແຟຣ໌ຟຽວດ໌ ໂທຣະສັພເບີ້ *9754 6840.*

ເພີ້ມຕື່ມຈາກນີ້ ຍັງມີເຮືອນໃຫ້ເຊົ່າແບບລະຍະສັ້ນ 40 ຫລັງ ແລະ ແບບລະຍະຍາວປານກາງ 10 ຫລັງ ໄວ້ບໍລິການແກ່ຜູ່ໃຊ້ບໍລິການທີ່ຖືກສົ່ງ ມາຈາກບໍລິການຊ່ວຍເຫລືອຕ່າງໆ.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ *Hume Community Housing Association* (ສະມາຄົມເຮືອນຊຸມຊົນ ເຂດ ຮູມ) ໂທຣະສັພ ເບີ *9724 0554.*

## ໂຄງການ ການພົວພັນຂັ້ນຕົ້ນ ແລະ ປ້ອງກັນ

### Cabramatta Street Team (ທີມ ເຮັດວຽກຕາມຖນົນ)

ທີມນີ້ຈະມີພນັກງານເຈັດຄົນ ຈາກ Department of Community Services (ກະຊວງບໍລິການຊຸມຊົນ) ຄົນຊຶ່ງຈະໃຫ້ຄວາມຊ່ວຍເຫລືອແກ່ພວກວັຍຣຸ່ນແລະອື່ນໆທີ່ມີບັນຫາຢາເສພຕິດ. ທີມນີ້ຈະ:

- ຊ່ວຍໃຫ້ຄົນເຂົ້າຫາຄອບຄົວຄືນອີກ, ແລະ
- ຊ່ວຍຕິດຕໍ່ຄົນທີ່ຂາດທີ່ອາສັຍຫາບໍລິການຕ່າງໆທີ່ຈະຊ່ວຍພວກເຂົາໄດ້

ທີມນີ້ຈະໄປຢ້ຽມຕາມສະຖານທີ່ຊຶ່ງເປັນທີ່ນິຍົມຂອງຊາວຫນຸ່ມໃນເຂດກາບຣາມາຕາ ແລະ ທີມນີ້ຈະມີຫ້ອງການຢູ່ທີ່ສະຖານີຕຳຣວດກາບຣາມາຕາ.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ *Fairfield Community Service Centre, Department of Community Services* ໂທຣະສັພ ເບີ *9728 1911.*

### Gateways (ເກຕເວຍ໌)

**Gateways** ແມ່ນໂຄງການປ້ອງກັນໂຄງການນຶ່ງຊຶ່ງໃຫ້ການສຶກສາດ້ານຢາເສພຕິດແກ່ນັກຮຽນຂັ້ນ ປະຖົມ ແລະ ມັທຍົມໃນເຂດກາບຣາມາຕາ. ໂຄງການນີ້ຍັງຈະໃຫ້ການຊ່ວຍເຫລືອເພີ້ມແກ່ນັກຮຽນຂັ້ນມັທຍົມ ທີ່ສ່ຽງຕໍ່ການຮຽນບໍ່ຈົບຊັ້ນປີ 12 ແລະ ຜູ່ທີ່ສ່ຽງຕໍ່ການໃຊ້ຢາເສພຕິດທີ່ຜິດກົດຫມາຍ.

ຈາກໄຕຣມາສທີສາມ ປີ 2001 ນັກຮຽນທີ່ມີຄວາມ "ສ່ຽງ" 600 ຄົນຈະໄດ້ຮັບການເບິ່ງແຍງແບບສົມບູນ ຊຶ່ງຮວມເຖິງແຜນການສຶກສາສ່ວນບຸກຄົນເພື່ອປັບປຸງຄວາມສາມາດໃນການຂຽນອ່ານແລະ ເລກ, ການໄປໂຮງຮຽນ ແລະ ນິສັຍເຮັດການບ້ານຢູ່ເຮືອນ.

ເພື່ອໃຫ້ຄວາມຊ່ວຍເຫລືອເພີ້ມ ຄຣູຈຳນວນກວ່າ 70 ຄົນພວມຖືກຝຶກຝົນເພື່ອໃຫ້ເປັນຜູ່ຊ່ວຍພວກນັກຮຽນ.

ທາງ Department of Education and Training ຍັງຈະມີ **Drug Education Consultant** (ທີ່ປຶກສາດ້ານການສຶກສາເຣື່ອງຢາເສພຕິດ) ເພີ້ມອີກຄົນນຶ່ງ ເພື່ອໃຫ້ຄວາມຊ່ວຍເຫລືອດ້ານການສຶກສາເຣື່ອງຢາເສພຕິດແກ່ໂຮງຮຽນຣັຖບານທັງຫລາຍໃນເຂດນີ້.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ຫ້ອງການ *Department of Education and Training* ເຂດແຟຣ໌ ຟຽວດ໌ ໂທຣະສັພ ເບີ *9793 4900*

### Primary Connect (ການເຊື່ອມຕໍ່ຂັ້ນປະຖົມ)

**Primary Connect** ແມ່ນໂຄງການໃຫມ່ຊຶ່ງຈະທົດລອງໃນໂຮງຮຽນຂັ້ນປະຖົມຈຳນວນນ້ອຍນຶ່ງ ຮວມ ທັງໂຮງຮຽນໃນເຂດກາບຣາມາຕາ. ໂຄງການ Primary Connect ຈະໃຫ້ການພັທນາເຍົາວະຊົນອາຍຸລະຫວ່າງ 5 ຫາ 12 ປີ ແລະ ໃຫ້ການຊ່ວຍເຫລືອການເປັນພໍ່ແມ່ຂອງຄອບຄົວພວກເຂົາອີກນຳ.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ *Department of Education and Training* ໂທຣະສັພ ເບີ *9561 8311 .*

## ໂຄງການ Families First (ຄອບຄົວມາກ່ອນ)

ໂຄງການ **Families First** ຈະຊ່ວຍເຫລືອຄອບຄົວທີ່ມີລູກອາຍຸຕ່ຳກວ່າ 8 ປີ 100 ກວ່າ ຄອບຄົວໃນ ເຂດກາບຣາມາຕາ, ແຄນລີເວລ, ບອນນີຣິກ ແລະ ແຟຣ໌ຟຽວດ໌.

ພາຍໃຕ້ໂຄງການນີ້ ໂຮງຮຽນໃນທ້ອງຖິ່ນຈະເປັນຈຸດສູນກາງແກ່ພໍ່ແມ່ ແລະ ຊຸມຊົນ ດ້ວຍການໃຫ້:

- ໂອກາດແກ່ຄອບຄົວທັງຫລາຍມາພົບພໍ້ຊຶ່ງກັນແລະກັນ
- ການຕິດຕໍ່ກັບບໍລິການຕ່າງໆໃນຊຸມຊົນທ້ອງຖິ່ນ
- ຂໍ້ມູນຕ່າງໆກ່ຽວກັບການເປັນພໍ່ແມ່ ແລະ ການເຕີບໂຕຂອງເດັກ ແລະ
- ຂໍ້ມູນກ່ຽວກັບລະບົບຂອງໂຮງຮຽນແລະວິທີການຊ່ວຍເຫລືອລູກໃນການກຽມຕົວເຂົ້າໂຮງຮຽນ

ໂຄງການນີ້ຈະເລີ້ມໃນລະຫວ່າງໄຕຣມາສທີສີ່ຂອງປີ 2001.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ໂຄງການ *Families First* ໂທຣະສັພ ເບີ *9797 8133.*

### Cabramatta Mobile Childcare and Family Counselling Service (ບໍຣິການ ເບິ່ງແຍງເດັກ ແບບເຄື່ອນທີ່ ແລະການໃຫ້ຄຳປຶກສາແກ່ຄອບຄົວໃນເຂດ ກາບຣາມາຕາ)

ຈາກເດືອນກັນຍາ (9) 2001, Uniting Care-Burnside (ຢູນ ຢູໄນຕິງ ແຄຣ໌ - ເບີຣ໌ນຊາຍດ໌) ໄດ້ ຮັບທຶນໃນການໃຫ້ບໍລິການດ້ານໃຫ້ຄຳປຶກສາແກ່ຄອບຄົວ, ການຊ່ວຍເຫລືອຄອບຄົວຢ່າງແຂງຂັນ ແລະ ບໍລິການເບິ່ງແຍງເດັກແບບເຄື່ອນທີ່ເພື່ອຊ່ວຍຄອບຄົວໃນເຂດເຫລົ່ານີ້ຕື່ມອີກ 350 ຄອບຄົວໃນແຕ່ລະປີ.

ໂຄງການ **Family Counselling Service** ຈະໃຫ້ຄຳປຶກສາແກ່ຄອບຄົວໃນສະຖານທີ່ທີ່ຜູ່ຄົນ ແລະ ຄອບຄົວພວກເຂົາມີຄວາມຮູ້ສຶກສະດວກສະບາຍທີ່ສຸດ. ນີ້ອາດຈະຮວມເຖິງຢູ່ໃນເຮືອນພວກເຂົາເອງ.

### Cabramatta Place Project

ໃນເດືອນເມສາ (4) 1997, ສຳນັກງານນາຍົກຣັຖ, ດ້ວຍຄວາມຮ່ວມມືກັບເທສບານເມືອງແຟຣ໌ຟຽວດ໌ ແລະ ຫ້ອງການອື່ນໆໄດ້ສ້າງຕັ້ງໂຄງການ **Cabramatta Place Project** ຂຶ້ນເພື່ອຕໍ່ສູ້ກັບການໃຊ້ຢາເສພຕິດທີ່ຜິດກົດຫມາຍ ແລະ ຜົນກະທົບຕໍ່ຊຸມຊົນໃນເຂດກາບຣາມາຕາ.

ໂຄງການ **Cabramatta Anti-Drug Strategy** ເກີດມາຈາກຄວາມສຳເຣັດຂອງໂຄງການ Cabramatta Place Project ແລະ ຜົນງານຂອງ Fairfield Community Drug Action Team.

ໂຄງການນີ້ຊ່ວຍໃຫ້ມີຜົນຮັບທີ່ດີຮວມທັງ:

- ຄວາມປອດພັຍຂອງຊຸມຊົນເພີ້ມຂຶ້ນ
- ຄວາມສັມພັນກັບຕຳຣວດດີຂຶ້ນ
- ມີການຮັກສາສຳລັບພວກໃຊ້ຢາເສພຕິດ ແລະ ກິນເຫລົ້າ ຫລາຍຂຶ້ນ
- ຊາວຫນຸ່ມມີໂອກາດໄດ້ວຽກງານແລະການຝຶກຫັດຫລາຍຂຶ້ນ
- ສົ່ງເສີມໃຫ້ກາບຣາມາຕາເປັນຈຸດທ່ອງທ່ຽວ
- ຖນົນສະອາດ ແລະ ປອດພັຍຂຶ້ນ

ໃນຂັ້ນສອງຂອງໂຄງການນີ້,ຫ້ອງການນາຍົກຣັຖເປັນຜູ່ນຳແລະອຳນວຍຄວາມສະດວກໂຄງການ Cabramatta Anti-Drug Strategy.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ຜູ່ຈັດການໃຫຍ່ຂອງໂຄງການ *Cabramatta Place Project* ໂທຣະສັພ ເບີ້ *9724 7811*

**Intensive Family Support** (ການຊ່ວຍເຫລືອຄອບຄົວຢ່າງແຂງຂັນ) ໂຄງການນີ້ຈະເຮັດວຽກກັບຄອບຄົວຢ່າງໃກ້ຊິດຂຶ້ນ, ເຊື່ອມໂຍງພວກເຂົາກັບບໍລິການຕ່າງໆທີ່ພວກເຂົາຕ້ອງການເພື່ອຊ່ວຍພວກເຂົາ ໃນບັນຫາເຣື່ອງຢາເສພຕິດຂອງ ສະມາຊິກຄອບຄົວ.

ເພື່ອຊ່ວຍໃຫ້ຄອບຄົວເຂົ້າເຖິງໂຄງການເຫລົ່ານີ້ **Mobile Childcare Service** ຈະໃຫ້ການເບິ່ງແຍງ ເດັກແກ່ຄອບຄົວທີ່ເຂົ້າຮ່ວມບໍລິການໃຫ້ຄຳປຶກສາຄອບຄົວແລະບໍລິການການຊ່ວຍເຫລືອອັນແຂງຂັນ.

ໂຄງການ Intensive Family Support ແລະໂຄງການ Family Counselling ເຮັດວຽກກັບຜູ່ທີ່ຖືກ ສົ່ງມາໂດຍ Cabramatta Street Team.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ *Department of Community Services* ໂທຣະສັພ ເບີ້ *9797 8133.*

## ຂໍ້ມູນ ແລະ ບົດບາດ ຂອງ ຊຸມຊົນ

### Youth Action Team (ທີມບົດບາດຊາວໜຸ່ມ)

**Youth Action Team** ໄດ້ຖືກຕັ້ງຂຶ້ນໂດຍໂຄງການ Cabramatta Place Project ເພື່ອຈະປະສານງານກັບບໍລິການສຳລັບຊາວໜຸ່ມໃຫ້ດີຂຶ້ນ ແລະ ເພື່ອເຮັດວຽກໃນການປັບປຸງເຣື່ອງ:

- ໂອກາດການຫາຄວາມບັນເທີງ ແລະ ກິລາ
- ຄວາມສັມພັນລະຫວ່າງຕຳຣວດແລະຊາວໜຸ່ມ ແລະ
- ທີ່ພັກອາສັຍ, ສຸຂພາບ ແລະ ບໍລິການຊ່ວຍເຫລືອອື່ນໆ

ນີ້ຣວມທັງຜູ່ຕາງໜ້າຈາກຣັຖບານ, ບໍ່ແມ່ນຣັຖບານ ແລະ ຊຸມຊົນ

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ຜູ່ຈັດການໃຫຍ່ໂຄງການ *Cabramatta Place Project* ໂທຣະສັພ ເບີ *9724 7811.*

### ໂຄງການສອນເຣື່ອງຢາເສພຕິດນາໆວັທນະທັມ

ໃນເຂດການຣາມາຕານີ້, ມັນຈຳເປັນທີ່ຊັພຍາກອນການສອນເຣື່ອງຢາເສພຕິດຕ້ອງໃຫ້ເຂົ້າກັບຄວາມຕ້ອງການຂອງຊຸມຊົນທີ່ບໍ່ເວົ້າພາສາອັງກິດທັງຫລາຍ.

ໂຄງການສອນເຣື່ອງຢາເສພຕິດນາໆວັທນະທັມຈະ:

- ພິມໜັງສືນາໆພາສາຊຶ່ງໃຫ້ຄຳແນະນຳທີ່ໃຊ້ໄດ້ຜົນດີຕໍ່ບັນຫາທີ່ກ່ຽວພັນກັບຢາເສພຕິດ
- ຊ່ວຍເຫລືອໂຮງຮຽນ, ຫ້ອງການຕ່າງໆໃນທ້ອງຖິ່ນ ແລະ Fairfield Drug Action Team ໃຫ້ເຮັດວຽກຮ່ວມກັບຊຸມຊົນທີ່ບໍ່ເວົ້າພາສາອັງກິດທັງຫລາຍ.

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ຜູ່ຈັດການໃຫຍ່ຂອງໂຄງການ *Cabramatta Place Project* ໂທຣະສັພ ເບີ້ *9724 7811.*

### Drugs and Community Action Strategy (ແຜນບົດບາດ ທີມຢາເສພຕິດ ແລະ ຊຸມຊົນ)

**Drugs and Community Action Strategy** ໄດ້ຖືກສ້າງຕັ້ງຂຶ້ນຍ້ອນຜົນຮັບຂອງການປະຊຸມ ເຣື່ອງຢາເສພຕິດໃນຣັຖນິວເຊົາທ໌ເວລສ໌ໃນປີ 1999. ແຜນນີ້ຊ່ວຍໃນການຈັດຕັ້ງຄນະທີມ ແລະພວກມີສ່ວນຮ່ວມຕ່າງໆໃນທ້ອງຖິ່ນເຊັ່ນ Community Drug Action Teams (CDATs) ເພື່ອໃຫ້ ເຮັດວຽກຮ່ວມກັບກຸ່ມຊຸມຊົນຕ່າງໆເພື່ອຕອບສນອງບັນຫາເຣື່ອງຢາເສພຕິດໃນທ້ອງຖິ່ນ.

ກຸ່ມ CDAT ແຟຣ໌ຟຽວດ໌ໄດ້ຖືກສ້າງຕັ້ງຂຶ້ນໃນປີ1997. ຜົນສຳເຣັດຂອງໂຄງການນີ້ໄດ້ຊ່ວຍເຮັດໃຫ້ມີການຈັດວາງແຜນນີ້ຂຶ້ນ. ກຸ່ມນີ້ໄດ້ລິເລີ້ມໂຄງການຫລາຍອັນເຊັ່ນ Café Horizons (ກາເຟຂອບຟ້າ), Adra Café (ອາດຣາກາເຟ) ແລະການພິມໜັງສືນາໆພາສາກ່ຽວກັບຢາເສພຕິດ *Drugs, Young People and the Law* (ຢາເສພຕິດ ຊາວໜຸ່ມ ແລະ ກົດໝາຍ).

ເພື່ອຂໍເອົາຂໍ້ມູນເພີ້ມ ຈົ່ງຕິດຕໍ່ຜູ່ຈັດການໂຄງການເຂດຊິດນີຕະເວັນຕົກສ່ຽງໃຕ້ ໂທຣະສັພ ເບີ້ *9793 1577* ຫລືເປີດເບິ່ງເວັບໄຊດ໌ ຂອງ *Drugs and Community Action* ທີ່ *www.communitybuilders.nsw.gov.au/drugs_action*

### ການຂຍາຍທີມເກັບເຂັມສັກຢາ

ຜູ່ທີ່ກະທຳຄວາມຜິດແລະພວມໃຊ້ໂທດແບບ Periodic Detention Orders (ຄຳສັ່ງກັກຂັງເປັນລະຍະ) ຕ້ອງລາດຕະເວນສມ່ຳສເມີເພື່ອເກັບມ້ຽນເຂັມສັກຢາທີ່ຖືກຖິ້ມຕາມຖນົນ. ໂຄງການນີ້ຈະຖືກຂຍາຍຂຶ້ນ. ຖ້າຫາກທ່ານພົບເຫັນເຂັມສັກຢາທີ່ຖືກຖິ້ມຢູ່ທົ່ວໄປ ກະຣຸນາໂທຣະສັພຫາສາຍດ່ວນ **Needle Clean-Up Hotline** ໂດຍບໍ່ຕ້ອງເສັຍຄ່າ ເບີ **1800 633 353.**

## ຂໍ້ມູນເພີ້ມຕື່ມ

### ຕ້ອງການຄວາມຊ່ວຍເຫລືອບໍ?

ຖ້າທ່ານ ຫລື ຜູ່ໃດຜູ່ນຶ່ງທີ່ທ່ານຮູ້ຈັກຕ້ອງການຄວາມຊ່ວຍເຫລືອ ຫລື ຄຳແນະນຳເຣື່ອງຢາເສພຕິດຢ່າງ ເປັນຄວາມລັບຈົ່ງໂທຣະສັພຫາ **Alcohol and Drug Information Service (ADIS)** (ສາຍບໍລິການຂໍ້ມູນເຣື່ອງເຫລົ້າແລະຢາເສພຕິດ) ໂທຣະສັພເບີ **9361 8000** (ພາຍໃນເມືອງຊິດນີເທົ່ານັ້ນ) ຫລື ໂທຣະສັພໂດຍບໍ່ເສັຍຄ່າ ເບີ **1800 422 599** (ນອກຊິດນີ).

ADIS ເປີດຕລອດ 24 ຊົ່ວໂມງຕໍ່ມື້, ໃຫ້ຄຳແນະນຳທີ່ຖືເປັນຄວາມລັບ, ໃຫ້ຂໍ້ມູນ ແລະ ສົ່ງໄປຫາບໍລິການອື່ນໆໃນທ້ອງຖິ່ນ.

ໃນຖານະທີ່ເປັນພໍ່ແມ່, ການຕໍ່ສູ້ກັບບັນຫາຢາເສພຕິດອາດເປັນສິ່ງລຳບາກ. ເພື່ອຂໍຄຳແນະນຳວ່າຈະໂອ້ລົມກັບພວກຊາວໜຸ່ມເຣື່ອຢາເສພຕິດຫລືບັນຫາເຣື່ອງຄວາມປະພຶດແບບໃດ ກະຣຸນາຕິດຕໍ່ **Parent Line** (ສາຍສຳລັບພໍ່ແມ່) ໂດຍບໍ່ເສັຍຄ່າ ເບີ **13 20 55.**

### ການຣາຍງານເຣື່ອງອາຊຍາກັມກ່ຽວກັບຢາເສພຕິດ

ຂໍ້ມູນໃດໆທີ່ທ່ານມີໃນເຣື່ອງອາຊຍາກັມກ່ຽວກັບຢາເສພຕິດ, ເຖິງທ່ານຄິດວ່າມັນບໍ່ສຳຄັນ ແຕ່ວ່າມັນ ອາດສາມາດຊ່ວຍຕຳຣວດໃຫ້ທຳການຈັບກຸມຄົນຮ້າຍໄດ້. ເພື່ອຈະຣາຍງານອາຊຍາກັມກ່ຽວພັນຢາເສພຕິດ ຈົ່ງໂທຣະສັພຫາ **Crime Stoppers** (ຍັບຢັ້ງອາຊຍາກັມ) ໂດຍບໍ່ເສັຍຄ່າ ເບີ **1800 333 000.**

### ຢາກຮູ້ຕື່ມບໍ?

ຖ້າທ່ານຢາກຈະໄດ້ຂໍ້ມູນເພີ້ມຕື່ມກ່ຽວກັບການຕອບສນອງຕໍ່ເຣື່ອງຢາເສພຕິດຂອງຣັຖບານນິວເຊົາທ໌ ເວລສ໌ ຈົ່ງເປີດເບິ່ງ **www.druginfo.nsw.gov.au**

ທີ່ **www.druginfo.nsw.gov.au** ນີ້ ທ່ານຈະໄດ້ຂໍ້ມູນກ່ຽວກັບຢາເສພຕິດຕື່ມ, ໂຄງການຕ່າງໆ ແລະ ການປະເມີນຕ່າງໆເພື່ອຈະແກ້ໄຂກັບບັນຫາຢາເສພຕິດ. ສຳເນົາຂອງປຶ້ມ Drug Summit Plan of Action (ແຜນປະຊຸມບົດບາດກ່ຽວກັບຢາເສພຕິດ) ຂອງຣັຖບານນິວເຊົາທ໌ເວລສ໌, ຂໍ້ມູນ ອື່ນໆ ແລະ ການເຊື່ອມຕໍ່ຫາບ່ອນອື່ນໆທີ່ກ່ຽວຂ້ອງກໍຍັງມີບໍລິການທີ່ເວັບໄຊດ໌ນີ້.